**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ
ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ

ເລກທີ 1233 /ຄກຖ
ນະຄອນຫຼວງວຽງຈັນວັນທີ 10 ກຸມພາ 2026

# ໜັງສືເຊີນປະມູນ

**ເຖິງ: ບໍລິສັດ / ຫ້າງຮ້ານ ຜູ້ສະໜອງເຄື່ອງພິມເອກະສານ (Printers)**
**ລະຫັດສັນຍາເລກທີ: C1-G-062-1**

1. ລັດຖະບານ ສປປ ລາວ ໄດ້ຮັບເງິນກູ້ຢືມຈາກທະນາຄານໂລກ ເພື່ອນຳໃຊ້ເຂົ້າໃນ ໂຄງການຈົດທະບຽນ ແລະ ສະຖິຕິພົນລະເມືອງ ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນການຈັດຊື້ອຸປະກອນໄອທີ ເພື່ອປະກອບໃຫ້ທ້ອງຖິ່ນ.
2. ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຂໍເຊີນບໍລິສັດ/ຮ້ານຄ້າຜູ້ສະໜອງເຄື່ອງໄອທີ ທີ່ມີຄວາມສົນໃຈເຂົ້າຍື່ນຊອງປະມູນເພື່ອສະໜອງເຄື່ອງພິມເອກະສານ (Printers) ໃຫ້ແກ່ໂຄງການຈົດທະບຽນ ແລະ ສະຖິຕິພົນລະເມືອງ ໃນຈຳນວນ 888 ໜ່ວຍ ໄລຍະການສົ່ງມອບເຄື່ອງແມ່ນພາຍໃນ 30 ວັນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ໃນ ຄູ່ມືແນະນຳຂອງທະນາຄານໂລກວ່າດ້ວຍຫຼັກການການຈັດຊື້ຈັດຈ້າງສຳລັບປະເທດຜູ້ກູ້ຢືມ (Procurement Regulations for IPF Borrowers) ສະບັບເດືອນ ກໍລະກົດ 2016 ປັບປຸງ ເດືອນພະຈິກ 2017 ແລະ ເດືອນ ສິງຫາ 2018.
4. ຊອງປະມູນຕ້ອງສົ່ງກ່ອນ ເວລາ **15:00 ໂມງ ຂອງວັນທີ 24 ມີນາ 2026** ແລະ ຈະໄດ້ເລີ່ມເປີດຊອງປະມູນໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ເຂົ້າຮ່ວມປະມູນເປີດກວ້າງໃນຄັ້ງນີ້ ກໍລະນີການຍື່ນຊອງປະມູນທີ່ສົ່ງຊ້າຈະຖືກປະຕິເສດ.
5. ສະຖານທີ່ເປີດຊອງປະມູນ: ຫ້ອງປະຊຸມໂຄງການ ຊັ້ນ 01 ຕຶກເກົ່າກະຊວງພາຍໃນ, ຄຸ້ມຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບ້ານ ສີສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.
6. ບໍລິສັດ/ຫ້າງຮ້ານ ທີ່ສົນໃຈສາມາດພົວພັນເອົາເອກະສານປະມູນໄດ້ທີ່ ໂຄງການຈົດທະບຽນ ແລະ ສະຖິຕິພົນລະເມືອງ, ກະຊວງປ້ອງກັນຄວາມສະຫງົບ, ໃນໂມງ ແລະ ວັນລັດຖະການ, ເບີໂທຕິດຕໍ່ **020 56897738, 020 52428295.**

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງບໍລິສັດ/ຫ້າງຮ້ານ ເພື່ອເຂົ້າຮ່ວມປະມູນຕາມວັນເວລາ ແລະ ສະຖານທີ່ຂ້າງເທິງນີ້.

ຫົວໜ້າກົມ

ກະຊວງປ້ອງກັນຄວາມສະຫງົບ
ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ

ພົຈວ. ແກ່ນຈັນ ພົມມະຈັກ